ເຕັກນິກການຂະຫຍາຍພັນໝາກນ້ຳມັນ

ໂດຍ:ວຽງໄຊ ຢ່າຈູຕົວ, ສູນຂໍ້ມູນຂ່າວສານ

1. ຄຸນຄ່າຂອງການປູກໝາກນ້ຳມັນ

ປູກເປັນປ່າທົດແທນປ່າທີ່ຖືກທຳລາຍສາມາດແກ້ໄຂສະພາບໂລກຮ້ອນຊ່ວຍປັບປຸງສະພາບການສົມດຸນສະພາບແວດລ້ອມໃຫ້ຄົງເດີມເພື່ອການທ້ອງທ່ຽວທຳມະຊາດ, ຮັກສາແຫຼ່ງສະໜອງໂຮງງານຜະລິດໄຟຟ້າ.

- ເປັນພືດເສດຖະກິດຕົວໃໝ່ທີ່ໃຫ້ນ້ຳມັນພືດໃນລະດັບສູງເພື່ອ ຜະລິດເປັນນ້ຳມັນໃສ່ເຄື່ອງຈັກຊະນິດຕ່າງໆ ແບບປອດສານພິດ.
- ເປັນໄມ້ຢືນຕົ້ນໃຫ້ຜົນຜະລິດປີລະຄັ້ງເລີ່ມໃຫ້ຜົນຜະລິດ ແຕ່ອາຍຸ 3 ເຖິງ 70 ປີ
- ປູກໝາກນ້ຳມັນ 1 ເຮັກຕາ ດ້ວຍຂະໜາດ 4x6ແມັດ ຈະມີຕົ້ນໝາກນ້ຳມັນ 416 ຕົ້ນ .ໃນນຶ່ງປີຈະໃຫ້ໝາກ 10-15 ໂຕນ, ສາມາດສ້າງລາຍຮັບ ໄດ້13-15 ລ້ານກີບ/ປີ.

2. ວິທີການເກັບຮັກສາແກ່ນໝາກນ້ຳມັນ

- ໝາກນ້ຳມັນຈະເລີ່ມເກີດດອກໃນຕົ້ນລະດູຝົນ ແລະ ໝາກຈະແກ່ຕົ້ນລະດູໜາວ ເດືອນ 10-12.
- ສັງເກດເບິ່ງໝາກນ້ຳມັນໜ່ວຍທີ່ແກ່ຈະມີສີດຳ ,ເກັບມາຕາກແດດໃຫ້ແຫ້ງແລ້ວແກະເອົາແກ່ນທາງໃນມາເກັບຮັກສາໄວ້ບ່ອນທີ່ຮົ່ມອາກາດລ່ວງດີ.
- ຄັດເລືອກເອົາແກ່ນທີ່ຕື່ງ ແລະ ສົມບູນດີໄວ້ເຮັດແນວພັນ.ເນື້ອທີ່ 1 ເຮັກຕາ ຈະໃຊ້ແນວພັນ 1-2ກິໂລກຼາມ.

ການກະກຽມອຸປະກອນມີ

ຖົງຢາງຈຳນວນ 500 ຖົງ, ຂະໜາດ ຖົງ 5x10 ຊຕມ.

1. ດິນຊາຍແກມຕົມຫຼືຝຸ່ນຄອກປະສົມ.
2. ແປງໜານຕັ້ງຖົງເກັບຮັກສາຢູ່ບ່ອນຮົ່ມ ຫຼື ຕານ່າງກັນແສງ. ນຳໃຊ້ຂີ້ເລື່ອຍ ຫຼື ຂີ້ແກບໝັກແກ່ນ.

3. ວິທີການກ້າແກ່ນ

- ໝາກນ້ຳມັນມີເປືອກແຂງນ້ຳຊຶມເຂົ້າຫຍາກຕ້ອງຕັດຫົວແຫຼມໃຫ້ເປັນຮູໃຫ້ນ້ຳສາມາດຊຶມເຂົ້າໄດ້.
- ແຊ່ນ້ຳໄວ້ 1 ຄືນ ແລ້ວນຳໄປຄົນໃສ່ຂີ້ເລື່ອຍ ຫຼື ຂີ້ແກບໝັກໄວ້ບ່ອນທີ່ຮົ່ມເຢັນຫົດນ້ຳທຸກເຊົ້າ -ແລງ ແລ້ວເອົາ ແພຢາງປົກຄຸມຈົນແກ່ນແຕກເຫັນສີຂາວຕາມແກ່ນ.

ການກະກຽມຮ່າຍເບົ້າຖົງຢາງ

- ກຽມໜານເພື່ອວາງຖົງເບົ້າຂະໜາດ 1 ແມັດ,ກວ້າງ,ຍາວຕາມຄວາມເໝາະສົມ ,ໃຊ້ໄມ້ກ້ານເປັນຂອບ ແລ້ວເອົາ ແພຢາງປູພື້ນ.
- ນຳຖົງຢາງເບົ້າໄປລຽນເປັນແຖວຫົດນ້ຳກ່ອນຈະນຳແກ່ນໄປປັກໃສ່ 2 ມື້.
- ເມື່ອເຫັນແກ່ນແຕກຂາວແລ້ວເອົາແກ່ນລົງເບົ້າ 1ເມັດຕໍ່ເບົ້າ. ເອົາສິ່ງກັນແດດມາປົກຄຸມ.
- ຫົດນ້ຳເຊົ້າ- ແລງ ຈົນ ເຖິງ 4-5 ມື້, ເບ້ຍໝາກນ້ຳມັນຈະແຕກພົ້ນດິນຂຶ້ນ.

• ກໍລະນີເບ້ຍໝາກນ້ຳມັນແຕກພົ້ນຂຶ້ນດິນແຕ່ກົບລ້ຽງບໍ່ສາມາດຫຼົ່ນເອງໄດ້ຕ້ອງໃຊ້ວິທີແກະເອົາກົບລ້ຽງທີ່ຕິດຢູ່ອອກ.

• ຂໍ້ລະວັງບໍ່ຄວນເຮັດໃຫ້ໃບ ແລະ ລຳຕົ້ນອ່ອນຫັກ.

• ຕ້ອງຫົດນ້ຳສະໝ່ຳສະເໝີ ເຊົ້າ- ແລງ ຈົນກວ່າອາຍຸຂອງເບ້ຍໄມ້ໄດ້ 40-45 ມື້ມີໃບ 4-6 ໃບ ສາມາດນຳໄປປູກໄດ້.

4. ວິທີການປູກຕົ້ນໝາກນ້ຳມັນ

• ພື້ນທີ່ປູກຕ້ອງໃກ້ເສັ້ນທາງຄົມມະນາຄົມສະດວກໃນການເຂົ້າເຖິງ.

• ໄລຍະເວລາປູກແມ່ນເລີ່ມແຕ່ເດືອນ 4 - 6.

ປູກຕາມທຳມະຊາດ

• ຂຸດ ຂຸມ 30x30x30 ຊັງຕີແມັດ, ໄລຍະຫ່າງ 6x5ແມັດ ປະໄວ້ໃຫ້ຝົນຕົກຮຳ 2-3 ເທື່ອສັງເກດເຫັນດິນໄຫຼລົງຂຸມ.

• ເອົາແກ່ນຕາກ 1 ມື້ ແຊ່ 1 ຄືນ ໄປປູກຂຸມ 1 ເມັດ.

ປູກແບບວິທະຍາສາດ

• ຂຸດ ຂຸມ 50x50x50 ຊັງ ຕີ ແມັດ, ໄລຍະຫ່າງ 4x4ແມັດ ບ່ອນທີ່ສາມາດໃຊ້ທໍ່ສົ່ງນ້ຳແຕ່ລະຕົ້ນໄດ້ ແລະ ສາມາດນຳໃຊ້ເຕັກນິກໃຫ້ເກີດໝາກນອກລະດູໄດ້.

5. ການບົວລະບັດຮັກສາ

• ເມື່ອເບ້ຍທີ່ນຳໄປປູກຕິດຮາກເລີ່ມມີການຂະຫຍາຍຕົວແຂງແຮງຄວາມສູງໄດ້ 30-50 ຊັງຕີແມັດ ໃຫ້ເດັດຍອດຖິ້ມ.

• ເມື່ອແຕກຍອດໃໝ່ອອກມາໃຫ້ເລືອກເອົາຍອດທີ່ແຂງແຮງໄວ້ 3 ຍອດເຫຼືອນັ້ນໃຫ້ລີຖິ້ມ.

• ເມື່ອ 3 ຍອດ ຂະຫຍາຍຕົວຍາວຂຶ້ນໄດ້ 30 ຊັງຕີແມັດ ແລ້ວໃຫ້ເດັດຖິ້ມ.

• ເມື່ອ 3 ງ່າແຕກຍອດອອກໃຫ້ຄັດເລືອກເອົາງ່າທີ່ສົມບູນປະໄວ້ເຫຼືອນັ້ນໃຫ້ລີຖິ້ມໝົດ ,ທັງໝົດຊົງຟຸ່ມ 1-3-9-12.

• ເພື່ອໃຫ້ງ່າທີ່ຈົ່ງໄວ້ມີແນວເນີ້ງຕາມເປົ້າໝາຍຕ້ອງໃຊ້ໄມ້ບັງຄັບແຕ່ລະງ່າໃຫ້ເນີ້ງຕາມທິດທີ່ປະສົງບໍ່ໃຫ້ງ່າຕີບກັນ.

6. ເພື່ອປະຕິບັດຕາມທິດຊີ້ນຳຖືເອົາພືດໄລຍະສັ້ນ,ໄລຍະກາງ ຫຼື ລ້ຽງພືດໄລຍະຍາວຈຶ່ງກຳນົດພືດສະລັບການປູກ

ໝາກນ້ຳມັນດັ່ງນີ້:

1. ພືດໄລຍະກາງ: ໃຫ້ປູກພືດຕົ້ນຖົ່ວແຮສັບຫວ່າງການປູກໝາກນ້ຳມັນເມື່ອຮອດເດືອນ 12 ຈະສາມາດນຳເອົາຄັ່ງ ມາປ່ອຍໃສ່ຕົ້ນຖົ່ວແຮໄດ້ເຄິ່ງນຶ່ງສ່ວນອີກເຄິ່ງນຶ່ງຈົ່ງໄວ້ປ່ອຍໃນລະດູທີ 2 ຄື ເດືອນ6 ແລ້ວໝູນວຽນໄປ ເຖິງ 3 ປີ ຕົ້ນຖົ່ວແຮຈະຕາຍເລີ່ມປູກຫຍ້າລ້ຽງສັດ.

2. **ຫຼີດໄລຍະສັ້ນ:** ໃຫ້ປູກເຂົ້າສາລີ ຫຼື ໝາກເດືອຍ,ໝາກງາສະລັບຕາມຄວາມເໝາະສົມ.